ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

# ຝຶກອົບຮົມທາງດ້ານວິຊາການພາຍໃຕ້ຂອບການຮ່ວມມື 02 ຝ່າຍ ລະຫວ່າງ ທຫລ ແລະ ທຫວ ປະຈໍາປີ 2024




ໃນລະຫວ່າງວັນທີ 18-20 ກັນຍາ 2024, ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຝຶກອົບຮົມທາງດ້ານວິຊາການພາຍໃຕ້ຂອບການຮ່ວມມື 02 ຝ່າຍ ປະຈໍາປີ 2024 ລະຫວ່າງ ທຫລ ແລະ ທະນາຄານແຫ່ງລັດ ຫວຽດນາມ (ທຫວ) ໃນຫົວຂໍ້: ຫຼັກການໃນການກໍານົດທະນາຄານທີ່ມີຄວາມສໍາຄັນຕໍ່ລະບົບ (Principles to Identify Systemically Important Banks), ໂດຍການເປັນປະທານຂອງທ່ານ ນ. ມະນີພອນ ອິນຕາວັນ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ຕາງໜ້າ ທຫວ ໃຫ້ກຽດບັນຍາຍ ແລະ ແລກ ປ່ຽນບົດຮຽນ ໂດຍທ່ານ ນ. ຫງວຽນທິຈິງ (Nguyen Thi Chinh) ແລະ ທ່ານ ນ. ຈູທິຫງວງ (Chu Thi Hoang), ພ້ອມທັງຜູ້ເຂົ້າຮ່ວມທັງໝົດຈໍານວນ 39 ທ່ານ ທີ່ມາຈາກກົມບໍລິການທະນາຄານ, ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສະຖາບັນການທະນາຄານ ແລະ ສາຂາ ທຫລ ປະຈໍາພາກ.

ຈຸດປະສົງຂອງການຈັດຝຶກອົບຮົມຄັ້ງນີ້ ເພື່ອເສີມສ້າງຄວາມສາມາດດ້ານວິຊາການໃຫ້ພະນັກງານ ທຫລ ໂດຍສະເພາະເປັນການຖອດຖອນບົດຮຽນ ແລະ ແລກປ່ຽນປະສົບການ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທະນາຄານທຸລະກິດ ໃຫ້ມີປະສິດທິພາບ ແລະ ໝັ້ນຄົງ ປອດໄພ, ທັງເປັນການສ້າງຄວາມເຂົ້າໃຈ ກ່ຽວກັບຫຼັກການໃນການກໍານົດທະນາຄານທີ່ມີຄວາມສໍາຄັນຕໍ່ລະບົບທະນາຄານ, ໂດຍສະເພາະ ຮັບຟັງການນໍາສະເໜີບົດຮຽນຂັ້ນຕອນການກວດກາທະນາຄານທຸລະກິດ ທັງສໍານັກງານໃຫຍ່ ແລະ ສາຂາ; ວິທີການດໍາເນີນການກວດກາວຽກງານສະໜອງສິນເຊື່ອ; ການ

ຈັດຊັ້ນໜີ້ ແລະ ການຫັກຄ່າເສື່ອມ; ວິທີການກວດກາວຽກງານບໍລິຫານ, ຄຸ້ມຄອງ, ຄະນະກວດກາ, ລະບົບກວດກາ ແລະ ການກວດສອບພາຍໃນ ເພື່ອເສີມສ້າງທັກສະ ແລະ ພັດທະນາຄວາມສາມາດດ້ານວິຊາການຂອງພະນັກງານ ທຫລ ໃຫ້ດີຍິ່ງຂຶ້ນ ໂດຍອີງໃສ່ບົດຮຽນ, ມາດຕະຖານ ແລະ ແນວທາງປະຕິບັດທີ່ດີ ມາໝູນໃຊ້ໃນການພັດທະນາວຽກງານການຄຸ້ມຄອງທະນາຄານທຸລະກິດ ໃຫ້ມີປະສິດທິຜົນຍິ່ງຂຶ້ນ.



ການຈັດຝຶກອົບຮົມດັ່ງກ່າວ ໄດ້ດຳເນີນໄປເປັນເວລາ 02 ວັນ ເຄິ່ງ, ຊຶ່ງຜູ້ເຂົ້າຮ່ວມໄດ້ຮຽນຮູ້ ແລະ ເຂົ້າໃຈຕໍ່ບັນດາບົດຮຽນທີ່ໄດ້ຈາກວິທະຍາກອນ, ພ້ອມທັງ ມີການແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍເນື້ອໃນທີ່ເລິກເຊິ່ງ ຊຶ່ງເຮັດໃຫ້ການຝຶກອົບຮົມຄັ້ງນີ້ ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ-ພາບ: ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*